Vientiane Mai
Wednesday, March 7, 2018
Page 4

# ອາສາສະໝັກຍີ່ປຸ່ນ ກັບການປະກອບສ່ວນ ພັດທະນາຢູ່ ສປປ ລາວ

ໂຄງການອາສາສະໝັກຈາກໄຈກາ (JICA) ແມ່ນການເຊື່ອມໂຍງປະຊາຊົນຍີ່ປຸ່ນເຂົ້າໃນການຊ່ວຍເຫຼືອດ້ານການພັດທະນາເສດຖະກິດ-ສັງຄົມໃນບັນດາປະເທດຄູ່ຮ່ວມຂອງປະເທດຍີ່ປຸ່ນ ພາລະກິດຂອງໂຄງການນີ້ ກໍ່ຄືການປະກອບສ່ວນເຂົ້າໃນການພັດທະນາຢ່າງທົ່ວເຖິງ ສົ່ງເສີມເຈດຕະນາອັນດີງາມ ແລະ ຄວາມເຂົ້າໃຈລະຫວ່າງປະເທດ ເຊິ່ງຊາວໜຸ່ມ ແລະ ຜູ້ຊ່ຽວຊານອາວຸໂສແມ່ນຈະຖືກມອບໝາຍມາປະຈຳທີ່ປະເທດກຳລັງພັດທະນາເປັນເວລາ 2 ປີ ເພື່ອອາໄສຢູ່ຮ່ວມກັບຊຸມຊົນທ້ອງຖິ່ນໃນຖານະອາສາສະໝັກຊາວໜຸ່ມ (JOCV) ແລະ ອາວຸໂສ (SV) (ເອີ້ນໂດຍລວມວ່າ "ອາສາສະໝັກໄຈກາ") ອາສາສະໝັກແມ່ນຈະເຮັດວຽກໃນພື້ນທີ່ແຕກຕ່າງກັນໄປເຖິງ 120 ແຫ່ງ ເຊິ່ງເປັນທັງການສົ່ງເສີມການເພິ່ງພາໂຕເອງ ແລະ ເພີ່ມພູນຄວາມສາມັກຄີໃນບັນດາປະເທດທີ່ຮັບເອົາພວກເຂົາໂດຍຜ່ານວຽກງານອາສາສະໝັກ.

ໂຄງການດັ່ງກ່າວແມ່ນລິເລີ່ມຂຶ້ນໃນປີ 1965 ປະເທດລາວ ແມ່ນປະເທດທຳອິດທີ່ຍີ່ປຸ່ນສົ່ງອາສາສະໝັກມາ ປັດຈຸບັນອາສາສະໝັກຈາກໄຈກ້າ ຈຳນວນ 56 ທ່ານ ກຳລັງເຮັດໜ້າທີ່ວຽກງານຂອງຕົນໃນທົ່ວປະເທດລາວຢ່າງຫ້າວຫັນ ຂະແໜງການທີ່ໄດ້ຮັບການຊ່ວຍເຫຼືອຫຼາຍທີ່ສຸດກໍ່ຈະແມ່ນຂະແໜງກະສິກຳ ແລະ ປ່າໄມ້ ການສຶກສາ ແລະ ສາທາລະນະສຸກ ຕັ້ງແຕ່ປີ 2010 ຈຳນວນອາສາສະໝັກທີ່ມາເຮັດວຽກໃນຂະແໜງກິລາແມ່ນເພີ່ມຂຶ້ນເລື້ອຍໆ ນອກຈາກນີ້ ໂຄງການດັ່ງກ່າວຍັງໄດ້ປະກອບສ່ວນເຂົ້າສູ່ການພັດທະນາຊັບພະຍາກອນມະນຸດ ໂດຍການຖ່າຍທອດວິຊາຄວາມຮູ້ ແລະ ຄວາມສາມາດຈາກອາສາສະໝັກສູ່ຄູ່ຮ່ວມງານຄົນລາວ ທີ່ຈິງແລ້ວມີຄູ່ຮ່ວມງານຂັ້ນສູງຫຼາຍທ່ານທີ່ເຄີຍເຮັດວຽກກັບອາສາສະໝັກຍີ່ປຸ່ນມາກ່ອນແລ້ວ ອາສາສະໝັກໄຈກ້າຮູ້ສຶກວ່າການຊ່ວຍເຫຼືອໃນຂັ້ນທ້ອງຖິ່ນນັ້ນ ສາມາດເພີ່ມຄວາມເຂົ້າໃຈກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີ ພ້ອມດຽວກັນນັ້ນ ຍັງແມ່ນການສ້າງມິດຕະພາບອັນແໜ້ນແຟ້ນລະຫວ່າງອາສາສະໝັກ ແລະ ຄົນໃນທ້ອງຖິ່ນນຳອີກ ນອກຈາກນີ້ ປະສົບການຂອງອາສາສະໝັກທຸກໆທ່ານບໍ່ພຽງແຕ່ສ້າງປະໂຫຍດໃຫ້ແກ່ຊຸມຊົນທ້ອງຖິ່ນເທົ່ານັ້ນ ແຕ່ຍັງເປັນການຊ່ວຍເຝິກຝົນໃຫ້ໂຕເຂົາເຈົ້າເອງມີຄວາມອົດທົນຜ່ານຜ່າອຸປະສັກຕ່າງໆທີ່ປະສົບທັງໃນວຽກງານ ແລະ ການດຳລົງຊີວິດ ທຸກໆປີໂຕແທນຈາກອາສາສະໝັກໄຈກ້າຈະລາຍງານກິດຈະກຳຂອງຕົນເອງໃຫ້ແກ່ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

ສຳລັບອາສະໝັກຊາວໜຸ່ມ ແມ່ນໄດ້ລົງນາມໃນສັນຍາວັນທີ 23 ພະຈິກ 1965 ໄດ້ລິເລີ່ມປະຕິບັດການໃນວັນທີ 23 ພະຈິກ ໃນປີດຽວກັນ ໄດ້ໂຈະໃນເດືອນພຶດສະພາ 1978 ແລະ ໄດ້ສານຕໍ່ ໃນວັນທີ 24 ກໍລະກົດ 1989 ປັດຈຸບັນຍັງ ປະຈຳການ 48 ຄົນ ຍິງ 26 ຄົນ ຖ້ານັບແຕ່ເລີ່ມປະຕິບັດການ ປັດຈຸບັນຍັງມີທັງໝົດ 813 ຄົນ ຍິງ 350 ຄົນ ໂດຍລົງໃນຂະແໜງການສຶກສາ ສາທາລະນະສຸກ ກະສິກຳ ວັດທະນະທຳ ການບໍລິການສາທາລະນະ ແລະ ອື່ນໆ ສ່ວນອາສາສະໝັກອາວຸໂສຍັງປະຈຳການ 8 ຄົນ ຍິງ 1 ຄົນ ລວມທັງໝົດແຕ່ເລີ່ມຈັດຕັ້ງປະຕິບັດມີ 162 ຄົນ ຍິງ 26 ຄົນ ຖ້າລວມນັບແຕ່ໄລຍະເລີ່ມປະຕິບັດການໃນວັນທີ 18 ມີນາ 1999 ລົງປະຕິບັດການໃນຂະແໜງການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ ທ່ອງທ່ຽວ ສາທາລະນະສຸກ ທ່ອງທ່ຽວ ແລະ ອື່ນໆ.

ນາງ ຮາຣູກະ ພີຢາຂາຢະຊິ ອາສາສະໝັກໄຈກ້າ ດ້ານຂະແໜງຜະດຸງຄັນ ໄດ້ເລີ່ມວຽກງານຂອງຕົນໃນນາມເປັນ JOCV ທີ່ໂຮງໝໍເມືອງທຸລະຄົມຕັ້ງແຕ່ວັນທີ 1 ພະຈິກ 2016 ລາວກຳລັງເຮັດວຽກຮ່ວມກັບຄູ່ຮ່ວມງານຄົນລາວຢ່າງ ໃນການປັບປຸງສຸຂະພາບແມ່ ແລະ ເດັກໃນຂົງເຂດດັ່ງກ່າວ ລາວສາມາດເວົ້າພາສາລາວໄດ້ເກັ່ງປານວ່າແມ່ນຄົນລາວ ແລະ ທັງຍັງກະຕືລືລົ້ນໃນການຮຽນຮູ້ວັດທະນະທຳ ແລະ ຄົນລາວ ລາວຍັງມັກໃຊ້ເວລາກັບຄົນລາວຫຼັງເລີກວຽກນຳອີກປັດຈຸບັນລາວຍັງເຫຼືອເວລາໃນການເຮັດວຽກອີກພຽງແຕ່ 7 ເດືອນກ່ອນສັນຍາພາລະກິດຈະໝົດອາຍຸ.







ນາງ ຮາຣູກະ ພີຢາຂາຢະຊິ ໃຫ້ສຳພາດໃນໂອກາດຄະນະສື່ມວນຊົນລາວລົງເຄື່ອນໄຫວຕິດຕາມໂຄງການຮ່ວມມືເພື່ອການພັດທະນາປະເທດຍີ່ປຸ່ນ ທີ່ສະຖານເອກອັກຄະລັດຖະທູດແຫ່ງຍີ່ປຸ່ນ ຮ່ວມກັບອົງການໄຈກາ ປະຈຳ ສປປ ລາວ ຈັດຂຶ້ນ ເມື່ອບໍ່ດົນຜ່ານມາວ່າ: ຂ້າພະເຈົ້າຮູ້ສຶກດີໃຈຫຼາຍທີ່ໄດ້ເຂົ້າມາປະຕິບັດການເປັນອາສາສະໝັກຢູ່ ສປປ ລາວ ໃນໄລຍະຂອງການເຮັດວຽກຮ່ວມກັບແພດໝໍ ທີ່ໂຮງໝໍເມືອງທຸລະຄົມ ແຂວງວຽງຈັນ ຂ້າພະເຈົ້າໄດ້ຮຽນຮູ້ຫຼາຍໆຢ່າງ ໂດຍສະເພາະລະບົບການເຮັດວຽກຂອງແພດໝໍ ຍັງຕ້ອງໄດ້ມີການປັບປຸງເພື່ອເຮັດໃຫ້ການບໍລິການປະຊາຊົນໄດ້ທ່ວງທັນເວລາ ນອກນັ້ນ ການມາປະຕິບັດໜ້າທີ່ຢູ່ ສປປ ລາວ ຂ້າພະເຈົ້າຍັງໄດ້ຮຽນຮູ້ວັດທະນະທຳ ວິຖີຊີວິດຂອງປະຊາຊົນລາວນຳອີກ.